ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ສຳນັກງານນາຍົກລັດຖະມົນຕີ

ເລກທີ 99 /ນຍ

ນະຄອນຫລວງວຽງຈັນ, ວັນທີ 23/06/2008

# ດຳລັດ

## ວ່າດ້ວຍຕຳແໜ່ງບໍລິຫານຂອງລັດຖະກອນ ແຫ່ງ ສ.ປ.ປ.ລາວ

---

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ໜັງສືສະເໜີ ຂອງລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ 73/ທປຄ, ລົງວັນທີ11 ມິຖຸນາ 2008.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ.**

ດຳລັດສະບັບນີ້ ກຳນົດບັນດາປະເພດຕຳແໜ່ງບໍລິຫານ ຂອງລັດຖະກອນເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງວຽກງານຄຸ້ມຄອງລັດຖະກອນ ໃນໄລຍະໃໝ່, ເປັນບ່ອນອີງໃຫ້ແກ່ການແຕ່ງຕັ້ງ, ເລື່ອນຊັ້ນ, ໝູນວຽນຕຳແໜ່ງ ແລະ ເພື່ອປະຕິບັດອຸດໜູນຕຳແໜ່ງໃຫ້ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ.

**ມາດຕາ 2. ອະທິບາຍຄຳສັບ.**

ໃນດຳລັດສະບັບນີ້ ໄດ້ກຳນົດຕຳແໜ່ງບໍລິຫານ ຂອງຫົວໜ່ວຍວິຊາການ ລະດັບ 1, ລະດັບ 2 ທີ່ຂຶ້ນກັບກະຊວງ, ຊຶ່ງຫົວໜ່ວຍດັ່ງກ່າວມີຄວາມໝາຍ ດັ່ງນີ້ :

2.1 **ຫົວໜ່ວຍວິຊາການ ລະດັບ 1 ທີ່ຂຶ້ນກັບກະຊວງ** ໝາຍເຖິງ ຫົວໜ່ວຍວິຊາການທີ່ຜູ້ເປັນຫົວໜ້າມີຕຳແໜ່ງບໍລິຫານທຽບເທົ່າຫົວໜ້າກົມ;

2.2 **ຫົວໜ່ວຍວິຊາການ ລະດັບ 2 ທີ່ຂຶ້ນກັບກະຊວງ** ໝາຍເຖິງ ຫົວໜ່ວຍວິຊາການທີ່ຜູ້ເປັນຫົວໜ້າມີຕໍາແໜ່ງບໍລິຫານທຽບເທົ່າຮອງຫົວໜ້າກົມ.

**ມາດຕາ 3. ຕໍາແໜ່ງບໍລິຫານຂອງລັດຖະກອນ**

ຕໍາແໜ່ງບໍລິຫານຂອງລັດຖະກອນ ແຫ່ງ ສ.ປ.ປ.ລາວ ໝາຍເຖິງ ທີ່ຕັ້ງ, ຊັ້ນ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງລັດຖະກອນຢູ່ໃນລະບົບກົງຈັກການຈັດຕັ້ງຂອງພັກ,ລັດ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ.

**ມາດຕາ 4. ຂອບເຂດການນໍາໃຊ້ດໍາລັດ.**

ດໍາລັດສະບັບນີ້ ໃຊ້ບັງຄັບສະເພາະລັດຖະກອນ ທີ່ໄດ້ຮັບການແຕ່ງຕັ້ງໃຫ້ດໍາລົງຕໍາແໜ່ງບໍລິຫານທີ່ຖືກຕ້ອງຕາມລະບຽບກົດໝາຍ ຢູ່ໃນບັນດາອົງການຈັດຕັ້ງພັກ, ລັດ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ.

## ໝວດທີ II

## ປະເພດຕໍາແໜ່ງບໍລິຫານຂອງລັດຖະກອນ ແຫ່ງ ສ.ປ.ປ.ລາວ

**ມາດຕາ 5. ຕໍາແໜ່ງບໍລິຫານຂອງລັດຖະກອນແຫ່ງ ສ.ປ.ປ.ລາວ ໄດ້ຈັດວາງລະດັບແຕ່ຂັ້ນຮອງຫົວໜ້າທະບວງ ລົງຮອດລະດັບຕໍ່າສຸດຂັ້ນຈຸງານ, ໂດຍແບ່ງອອກເປັນ 8 ປະເພດ ຄື:**

5.1 **ຕໍາແໜ່ງບໍລິຫານປະເພດ 1**

1. ຮອງຫົວໜ້າທະບວງ, ອົງການທຽບເທົ່າທະບວງ;
2. ກໍາມະການໃນຄະນະກວດກາສູນກາງ;
3. ຜູ້ຊ່ວຍລັດຖະມົນຕີວ່າການ;
4. ຮອງຫົວໜ້າຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ (ທີ່ບໍ່ແມ່ນລັດຖະມົນຕີຊ່ວຍວ່າການ);
5. ປະທານສານອຸທອນ ແລະ ໄອຍະການປະຊາຊົນຂັ້ນອຸທອນ.

5.2 **ຕໍາແໜ່ງບໍລິຫານປະເພດ 2**

1. ຫົວໜ້າກົມ ແລະ ທຽບເທົ່າ, ຫົວໜ້າຫ້ອງການຂອງກະຊວງ, ອົງການທຽບເທົ່າກະຊວງ, ທະບວງ ແລະ ທຽບເທົ່າທະບວງ, ອົງການຈັດຕັ້ງພັກ, ອົງການແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ;
2. ຮອງປະທານສານອຸທອນ ແລະ ຮອງໄອຍະການປະຊາຊົນຂັ້ນອຸທອນ;
3. ປະທານສານ ແລະ ໄອຍະການປະຊາຊົນຂັ້ນແຂວງ, ນະຄອນຫລວງ;
4. ເຈົ້າເມືອງ;
5. ຫົວໜ້າເທດສະບານ;
6. ຫົວໜ້າຫົວໜ່ວຍວິຊາການ ລະດັບ 1 ທີ່ຂຶ້ນກັບກະຊວງ;
7. ຜູ້ອໍານວຍການໂຮງໝໍສູນກາງທີ່ຂຶ້ນກັບກະຊວງ;
8. ຮອງອະທິການບໍດີ, ຄະນະບໍດີມະຫາວິທະຍາໄລ;

9. ຜູ້ອຳນວຍການຂ່າວສານ, ວາລະສານ, ໜັງສືພິມທີ່ຂຶ້ນກັບກະຊວງຖະແຫລງຂ່າວແລະ ວັດທະນະທຳ
10. ຜູ້ອຳນວຍການສະຖານີວິທະຍຸກະຈາຍສຽງແຫ່ງຊາດ, ສະຖານີໂທລະພາບແຫ່ງຊາດ.

**5.3 ຕຳແໜ່ງບໍລິຫານປະເພດ 3**

1. ຮອງຫົວໜ້າກົມ ແລະ ທຽບເທົ່າ, ຮອງຫົວໜ້າຫ້ອງການຂອງກະຊວງ, ອົງການທຽບເທົ່າກະຊວງ, ແລະ ທຽບເທົ່າທະບວງ, ອົງການຈັດຕັ້ງພັກ, ອົງການແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ;
2. ຫົວໜ້າຫ້ອງການສຶກສາສິ່ງສູນກາງ;
3. ຫົວໜ້າຫ້ອງການສະພາທີ່ປຶກສາອາຊີວະສຶກສາ;
4. ຫົວໜ້າຫ້ອງວ່າການແຂວງ, ນະຄອນຫລວງ;
5. ຫົວໜ້າພະແນກການສາຍຕັ້ງ ແລະ ທຽບເທົ່າ ຢູ່ຂັ້ນແຂວງ, ນະຄອນຫລວງ;
6. ຮອງປະທານສານ ແລະ ຮອງໄອຍະການປະຊາຊົນຂັ້ນແຂວງ, ນະຄອນຫລວງ;
7. ຮອງເຈົ້າເມືອງ;
8. ຮອງຫົວໜ້າເທດສະບານ.
9. ຜູ້ອຳນວຍການວິທະຍາໄລ ແລະ ໂຮງຮຽນວິຊາຊີບຊັ້ນສູງ;
10. ຮອງຫົວໜ້າຫົວໜ່ວຍວິຊາການ ລະດັບ 1 ທີ່ຂຶ້ນກັບກະຊວງ;
11. ຫົວໜ້າຫົວໜ່ວຍວິຊາການ ລະດັບ 2 ທີ່ຂຶ້ນກັບກະຊວງ;
12. ຮອງຜູ້ອຳນວຍການໂຮງໝໍສູນກາງທີ່ຂຶ້ນກັບກະຊວງ;
13. ຮອງຄະນະບໍດີ;
14. ຫົວໜ້າຫ້ອງການ, ຫົວໜ້າພາກວິຊາ, ຜູ້ອຳນວຍການຫໍສະໝຸດ, ຜູ້ອຳນວຍການສູນໃນມະຫາວິທະຍາໄລ;
15. ຜູ້ອຳນວຍການໂຮງໝໍພາກ;
16. ຮອງຜູ້ອຳນວຍການຂ່າວສານ, ວາລະສານ, ໜັງສືພິມທີ່ຂຶ້ນກັບກະຊວງຖະແຫ່ລງຂ່າວ ແລະ ວັດທະນະທຳ;
17. ຮອງຜູ້ອຳນວຍການສະຖານີວິທະຍຸກະຈາຍສຽງແຫ່ງຊາດ, ສະຖານີໂທລະພາບແຫ່ງຊາດ.

**5.4 ຕຳແໜ່ງບໍລິຫານປະເພດ 4**

1. ຫົວໜ້າພະແນກສັງກັດກົມ, ຫ້ອງການຂອງກະຊວງ, ອົງການທຽບເທົ່າກະຊວງ, ທະບວງ ແລະ ທຽບເທົ່າທະບວງ, ອົງການຈັດຕັ້ງພັກ, ອົງການແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ;
2. ຮອງຫົວໜ້າຫ້ອງການສະພາທີ່ປຶກສາອາຊີວະສຶກສາ;
3. ຮອງຫົວໜ້າຫ້ອງການສຶກສາສິ່ງສູນກາງ;
4. ຮອງຫົວໜ້າຫ້ອງວ່າການແຂວງ, ນະຄອນຫຼວງ;
5. ຮອງຫົວໜ້າພະແນກການສາຍຕັ້ງ ແລະ ທຽບເທົ່າຢູ່ຂັ້ນແຂວງ, ນະຄອນຫລວງ;
6. ຫົວໜ້າພາສີປະຈຳເຂດ, ຫົວໜ້າຄັງເງິນແຫ່ງຊາດປະຈຳແຂວງ, ຫົວໜ້າສ່ວຍສາອາກອນປະຈຳແຂວງ;

7. ຫົວໜ້າຫ້ອງການສັງກັດຫ້ອງວ່າການແຂວງ, ນະຄອນຫລວງ;
8. ຫົວໜ້າຫ້ອງວ່າການເມືອງ, ເທດສະບານ;
9. ຫົວໜ້າຫ້ອງການຂະແໜງການສາຍຕັ້ງປະຈຳເມືອງ ແລະ ທຸງບເທົ່າ;
10. ປະທານສານປະຊາຊົນ ແລະ ໄອຍະການປະຊາຊົນເມືອງ;
11. ຮອງຜູ້ອຳນວຍການ ວິທະຍາໄລ ແລະ ໂຮງຮຽນວິຊາຊີບຊັ້ນສູງ;
12. ຮອງຫົວໜ້າຫົວໜ່ວຍວິຊາການ ລະດັບ 2 ທີ່ຂຶ້ນກັບກະຊວງ;
13. ຫົວໜ້າຫົວໜ່ວຍວິຊາການຕ່າງໆທີ່ຂຶ້ນກັບກົມ;
14. ຫົວໜ້າພະແນກສັງກັດມະຫາວິທະຍາໄລ, ໂຮງໝໍສູນກາງ, ສະຖາບັນ ແລະ ຫົວໜ່ວຍວິຊາການ ລະດັບ 1 ທີ່ຂຶ້ນກັບກະຊວງ;
15. ຮອງຫົວໜ້າພາກວິຊາ, ຮອງຫົວໜ້າຫ້ອງການ, ຮອງຫົວໜ້າຫໍສະໝຸດ ແລະ ຮອງຫົວໜ້າສູນໃນມະຫາວິທະຍາໄລ;
16. ຜູ້ອຳນວຍການໂຮງຮຽນວິຊາຊີບຊັ້ນກາງ;
17. ຜູ້ອຳນວຍການໂຮງຮຽນມັດທະຍົມຕອນປາຍ ແລະ ມັດທະຍົມສົມບູນ;
18. ຮອງຜູ້ອຳນວຍການໂຮງໝໍພາກ;
19. ຜູ້ອຳນວຍການໂຮງໝໍແຂວງ.

**5.5 ຕຳແໜ່ງບໍລິຫານປະເພດ 5**

1. ຮອງຫົວໜ້າພະແນກສັງກັດກົມ, ຫ້ອງການຂອງກະຊວງ, ອົງການທຽບເທົ່າກະຊວງ, ທະບວງ ແລະ ທຽບເທົ່າທະບວງ, ອົງການຈັດຕັ້ງພັກ, ອົງການແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ;
2. ຫົວໜ້າຂະແໜງຂອງຫ້ອງວ່າການແຂວງ ແລະ ນະຄອນຫລວງ;
3. ຮອງຫົວໜ້າຫ້ອງການສັງກັດຫ້ອງວ່າການແຂວງ, ນະຄອນຫລວງ;
4. ຫົວໜ້າຂະແໜງຂອງພະແນກການສາຍຕັ້ງ ແລະ ທຽບເທົ່າຢູ່ຂັ້ນແຂວງ, ນະຄອນຫລວງ;
5. ຮອງຫົວໜ້າຫ້ອງວ່າການເມືອງ, ເທດສະບານ;
6. ຮອງຫົວໜ້າຫ້ອງການຂອງຂະແໜງການສາຍຕັ້ງປະຈຳເມືອງ ແລະ ທຽບເທົ່າ;
7. ຫົວໜ້າຫ້ອງການສຶກສາສົງຂັ້ນແຂວງ;
8. ຮອງຫົວໜ້າພາສີປະຈຳເຂດ, ຮອງຫົວໜ້າຄັງເງິນແຫ່ງຊາດປະຈຳແຂວງ, ຮອງຫົວໜ້າສ່ວຍສາອາກອນປະຈຳແຂວງ, ຫົວໜ້າດ່ານພາສີຊາຍແດນ;
9. ຮອງໄອຍະການປະຊາຊົນເມືອງ.
10. ຮອງຫົວໜ້າພະແນກສັງກັດ ມະຫາວິທະຍາໄລ,ໂຮງໝໍສູນກາງ, ສະຖາບັນ ແລະ ຫົວໜ້າວິຊາການ ລະດັບ 1 ທີ່ຂຶ້ນກັບກະຊວງ;
11. ຫົວໜ້າຂະແໜງຂອງຫົວໜ່ວຍວິຊາການ ລະດັບ 2 ທີ່ຂຶ້ນກັບກະຊວງ;
12. ຮອງຫົວໜ້າຫົວໜ່ວຍວິຊາການຕ່າງໆທີ່ຂຶ້ນກັບກົມ;
13. ຮອງຜູ້ອຳນວຍການໂຮງໝໍແຂວງ;
14. ຫົວໜ້າຂະແໜງຂອງໂຮງໝໍພາກ;
15. ຜູ້ອຳນວຍການໂຮງໝໍເມືອງ;
16. ຮອງຜູ້ອຳນວຍການໂຮງຮຽນວິຊາຊີບຊັ້ນກາງ;

17. ຮອງຜູ້ອຳນວຍການໂຮງຮຽນມັດທະຍົມຕອນປາຍ ແລະ ມັດທະຍົມສົມບູນ;
18. ຜູ້ອຳນວຍການໂຮງຮຽນມັດທະຍົມຕອນຕົ້ນ;
19. ຜູ້ອຳນວຍການໂຮງຮຽນວິຊາຊີບຊັ້ນຕົ້ນ;
20. ຫົວໜ້າສະຖານີວິທະຍຸ, ໂທລະພາບ, ໜັງສືພິມ, ກອງສະແດງ, ຫໍພິພິດທະພັນ, ຫໍສະໝຸດ, ຫໍວັດທະນະທຳ ແລະ ກອງວິຊາການຕ່າງໆຢູ່ຊັ້ນແຂວງ.

**5.6 ຕຳແໜ່ງບໍລິຫານປະເພດ 6**

1. ຫົວໜ້າຂະແໜງຂຶ້ນກັບພະແນກສັງກັດກົມ, ຫ້ອງການຢູ່ບັນດາກະຊວງ, ອົງການທຽບເທົ່າກະຊວງ ທະບວງ ແລະ ທຽບເທົ່າທະບວງ, ອົງການຈັດຕັ້ງພັກ, ອົງການແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ;
2. ຮອງຫົວໜ້າຫ້ອງການສຶກສາສົ່ງຊັ້ນແຂວງ;
3. ຫົວໜ້າໜ່ວຍງານ ຂອງ ຫ້ອງວ່າການເມືອງ, ເທດສະບານ;
4. ຮອງຫົວໜ້າຂະແໜງຂອງ ຫ້ອງວ່າການແຂວງ, ນະຄອນຫລວງ;
5. ຮອງຫົວໜ້າຂະແໜງຂອງພະແນກການສາຍຕັ້ງ ແລະ ທຽບເທົ່າຢູ່ຊັ້ນແຂວງ, ນະຄອນຫລວງ;
6. ຫົວໜ້າໜ່ວຍງານຂອງຫ້ອງການສັງກັດຫ້ອງວ່າການແຂວງ, ນະຄອນຫລວງ;
7. ຮອງຫົວໜ້າດ່ານພາສີຊາຍແດນ, ຫົວໜ້າໜ່ວຍພາສີເຄື່ອນທີ່, ຫົວໜ້າຂະແໜງຂຶ້ນກັບພະແນກສ່ວຍສາອາກອນ, ຫົວໜ້າຂະແໜງຂຶ້ນກັບຄັງເງິນແຫ່ງຊາດປະຈຳແຂວງ, ຫົວໜ້າສ່ວຍສາອາກອນປະຈຳເມືອງ, ຫົວໜ້າຄັງເງິນແຫ່ງຊາດປະຈຳເມືອງ;
8. ຫົວໜ້າໜ່ວຍງານຂອງຫ້ອງການ ຂອງຂະແໜງການສາຍຕັ້ງປະຈຳເມືອງ ແລະ ທຽບເທົ່າ;
9. ຫົວໜ້າໜ່ວຍງານຂອງ ຫ້ອງການບັນດາຂະແໜງການຂອງເທດສະບານ.
10. ຫົວໜ້າຂະແໜງຂອງຫົວໜ່ວຍ ວິຊາການ ລະດັບ 1 ທີ່ຂຶ້ນກັບກະຊວງ;
11. ຮອງຫົວໜ້າຂະແໜງຂອງຫົວໜ່ວຍ ວິຊາການ ລະດັບ 2 ທີ່ຂຶ້ນກັບກະຊວງ;
12. ຫົວໜ້າໜ່ວຍງານຂອງຫົວໜ່ວຍວິຊາການທີ່ຂຶ້ນກັບກົມ;
13. ຮອງຜູ້ອຳນວຍການໂຮງຮຽນວິຊາຊີບຊັ້ນຕົ້ນ;
14. ຮອງຜູ້ອຳນວຍການໂຮງຮຽນມັດທະຍົມຕອນຕົ້ນ;
15. ຜູ້ອຳນວຍການໂຮງຮຽນປະຖົມສົມບູນ ແລະ ໂຮງຮຽນລ້ຽງເດັກ;
16. ຫົວໜ້າໜ່ວຍງານຂອງໂຮງຮຽນມັດທະຍົມຕອນປາຍ ແລະ ມັດທະຍົມສົມບູນ;
17. ຮອງຫົວໜ້າຂະແໜງຕ່າງໆ ສັງກັດວິທະຍາໄລ,ໂຮງຮຽນວິຊາຊີບຊັ້ນສູງ;
18. ຫົວໜ້າໜ່ວຍງານຕ່າງໆຂອງໂຮງຮຽນວິຊາຊີບຊັ້ນກາງ;
19. ຮອງຫົວໜ້າສະຖານີວິທະຍຸ, ໂທລະພາບ, ໜັງສືພິມ, ກອງສະແດງ, ຫໍພິພິດທະພັນ, ຫໍສະໝຸດ, ຫໍວັດທະນະທຳ ແລະ ກອງວິຊາການຕ່າງໆ ຢູ່ຊັ້ນແຂວງ;
20. ຮອງຫົວໜ້າຂະແໜງໂຮງໝໍພາກ;
21. ຫົວໜ້າໜ່ວຍງານຂອງໂຮງໝໍແຂວງ, ນະຄອນຫລວງ;
22. ຮອງຜູ້ອຳນວຍການໂຮງໝໍເມືອງ.

5.7 ຕຳແໜ່ງບໍລິຫານປະເພດ 7

1. ຮອງຫົວໜ້າໜ່ວຍພາສີເຄື່ອນທີ່, ຮອງຫົວໜ້າຂະແໜງຂຶ້ນກັບພະແນກສວຍສາອາກອນ, ຮອງຫົວໜ້າຂະແໜງຂຶ້ນກັບຄັງເງິນແຫ່ງຊາດປະຈຳແຂວງ, ຮອງຫົວໜ້າສ່ວຍສາອາກອນປະຈຳເມືອງ, ຮອງຫົວໜ້າຄັງເງິນແຫ່ງຊາດປະຈຳເມືອງ;
2. ຮອງຫົວໜ້າຂະແໜງຂຶ້ນກັບພະແນກສັງກັດກົມ, ຫ້ອງການ ຢູ່ບັນດາກະຊວງ, ທະບວງ ແລະ ອົງການ ທຽບເທົ່າກະຊວງ ແລະ ທຽບເທົ່າທະບວງ;
3. ຫົວໜ້າໜ່ວຍງານ ຂອງຂະແໜງການໃນພະແນກການສາຍຕັ້ງປະຈຳແຂວງ, ນະຄອນຫລວງ;
4. ຫົວໜ້າໜ່ວຍງານຂອງຂະແໜງການສາຍຕັ້ງປະຈຳເມືອງ, ເທດສະບານ ແລະ ທຽບເທົ່າ;
5. ຮອງຫົວໜ້າຂະແໜງ ຂອງຫົວໜ່ວຍ ວິຊາການ ລະດັບ 1 ທີ່ຂຶ້ນກັບກະຊວງ;
6. ຫົວໜ້າຈຸງານຂຶ້ນກັບກອງວິຊາການຂັ້ນແຂວງ;
7. ຫົວໜ້າໜ່ວຍງານສັງກັດຂະແໜງຂອງວິທະຍາໄລ ແລະ ໂຮງຮຽນວິຊາຊີບຊັ້ນສູງ;
8. ຮອງຫົວໜ້າໜ່ວຍງານຕ່າງໆຂອງໂຮງຮຽນວິຊາຊີບຊັ້ນກາງ;
9. ຫົວໜ້າຈຸງານຕ່າງໆຂອງໂຮງຮຽນວິຊາຊີບຊັ້ນຕົ້ນ;
10. ຫົວໜ້າຈຸງານຂອງໂຮງຮຽນມັດທະຍົມຕອນຕົ້ນ;
11. ຮອງຜູ້ອຳນວຍການໂຮງຮຽນປະຖົມສົມບູນ ແລະໂຮງຮຽນລ້ຽງເດັກ;
12. ຮອງຫົວໜ້າໜ່ວຍງານຂອງໂຮງຮຽນມັດທະຍົມຕອນປາຍ ແລະ ມັດທະຍົມສົມບູນ;
13. ຫົວໜ້າໂຮງຮຽນມູນລະປະຖົມ;
14. ຫົວໜ້າໜ່ວຍງານສັງກັດຂະແໜງ ຂອງໂຮງໝໍພາກ;
15. ຮອງຫົວໜ້າໜ່ວຍງານ ຂອງໂຮງໝໍແຂວງ, ນະຄອນຫລວງ;
16. ຫົວໜ້າຈຸງານ ຂອງໂຮງໝໍເມືອງ;
17. ຫົວໜ້າສຸກສາລາ.

5.8 ຕຳແໜ່ງບໍລິຫານປະເພດ 8

1. ຫົວໜ້າໜ່ວຍງານສັງກັດຂະແໜງຂອງພະແນກການທີ່ຂຶ້ນກັບກົມ;
2. ຮອງຫົວໜ້າໜ່ວຍງານຂອງພະແນກການສາຍຕັ້ງ ແລະ ທຽບເທົ່າຢູ່ຂັ້ນແຂວງ, ນະຄອນຫລວງ
3. ຮອງຫົວໜ້າໜ່ວຍງານສັງກັດຂະແໜງຂອງວິທະຍາໄລ ແລະ ໂຮງຮຽນວິຊາຊີບຊັ້ນສູງ;
4. ຮອງຫົວໜ້າຈຸງານຕ່າງໆ ຂອງໂຮງຮຽນວິຊາຊີບຊັ້ນຕົ້ນ;
5. ຮອງຫົວໜ້າຈຸງານ ຂອງໂຮງຮຽນມັດທະຍົມຕອນຕົ້ນ;
6. ຫົວໜ້າຈຸງານ ຂອງໂຮງຮຽນປະຖົມສົມບູນ ແລະໂຮງຮຽນລ້ຽງເດັກ;
7. ຫົວໜ້າຈຸງານສັງກັດໜ່ວຍງານທີ່ຂຶ້ນກັບໂຮງຮຽນວິຊາຊີບຊັ້ນກາງ;
8. ຫົວໜ້າຈຸງານ ຂອງໂຮງຮຽນມັດທະຍົມຕອນປາຍ ແລະ ມັດທະຍົມສົມບູນ;
9. ຫົວໜ້າຈຸງານສັງກັດໜ່ວຍງານ ຂອງຫ້ອງການຂະແໜງການສາຍຕັ້ງ ແລະ ທຽບເທົ່າ ຢູ່ຂັ້ນເມືອງ, ເທດສະບານ;
10. ຮອງຫົວໜ້າຈຸງານຂອງກອງວິຊາການຂັ້ນແຂວງ;
11. ຫົວໜ້າໜ່ວຍງານສັງກັດຂະແໜງ ຂອງພະແນກທີ່ຂຶ້ນກັບໂຮງໝໍສູນກາງ;
12. ຮອງຫົວໜ້າໜ່ວຍງານສັງກັດຂະແໜງ ຂອງໂຮງໝໍພາກ
13. ຫົວໜ້າຈຸງານສັງກັດໜ່ວຍງານ ຂອງໂຮງໝໍແຂວງ, ນະຄອນຫລວງ;

14. ຫົວໜ້າປ້ອມພາສີ, ຫົວໜ້າໜ່ວຍງານຂຶ້ນກັບສ່ວຍສາອາກອນປະຈໍາເມືອງ, ຫົວໜ້າໜ່ວຍງານຂຶ້ນກັບຄັງເງິນແຫ່ງຊາດປະຈໍາເມືອງ;
15. ຮອງຫົວໜ້າຈຸງານຕ່າງໆ ຂອງໂຮງໝໍເມືອງ;
16. ຮອງຫົວໜ້າສຸກສາລາ.

## ໝວດທີ III
## ບົດບັນຍັດສຸດທ້າຍ

### ມາດຕາ 6. ການຮັບເງິນອຸດໜູນຕໍາແໜ່ງ.

ລັດຖະກອນທຸກຄົນ ທີ່ໄດ້ຮັບການແຕ່ງຕັ້ງໃຫ້ດໍາລົງຕໍາແໜ່ງບໍລິຫານປະເພດໃດໜຶ່ງ ລວມທັງແຕ່ງຕັ້ງໃຫ້ຮັກສາການແທນຕໍາແໜ່ງບໍລິຫານປະເພດໃດໜຶ່ງ ແຕ່ 06 ເດືອນຂຶ້ນໄປ ຈະໄດ້ຮັບເງິນອຸດໜູນຕໍາແໜ່ງຕາມຊັ້ນຕໍາແໜ່ງ ນັ້ນ ແລະ ຕາມລະບຽບການກໍານົດ ນັບແຕ່ວັນຂໍ້ຕົກລົງແຕ່ງຕັ້ງມີຜົນສັກສິດເປັນຕົ້ນໄປ.

### ມາດຕາ 7. ການສິ້ນສຸດການຮັບເງິນອຸດໜູນຕໍາແໜ່ງ.

7.1 ລັດຖະກອນທຸກຄົນ ເມື່ອພົ້ນຈາກຕໍາແໜ່ງບໍລິຫານປະເພດໃດໜຶ່ງ ຢ່າງເປັນທາງການແລ້ວ ຈະບໍ່ໄດ້ຮັບເງິນອຸດໜູນຕໍາແໜ່ງນັ້ນອີກຕໍ່ໄປ, ນັບແຕ່ວັນຂໍ້ຕົກລົງໃຫ້ພົ້ນຈາກຕໍາແໜ່ງ ມີຜົນສັກສິດເປັນຕົ້ນໄປ.

7.2. ລັດຖະກອນ ຜູ້ພວມດໍາລົງຕໍາແໜ່ງບໍລິຫານປະເພດໃດໜຶ່ງ ໄດ້ໄປສຶກສາຮໍ່າຮຽນ, ບໍາລຸງຍົກລະດັບຢູ່ບ່ອນອື່ນຢ່າງເປັນປະຈໍາ ແຕ່ 06 ເດືອນຂຶ້ນໄປ ຫລື ຜູ້ທີ່ບໍ່ສາມາດປະຕິບັດໜ້າທີ່ຕໍາແໜ່ງທີ່ພວມດໍາລົງຕໍາແໜ່ງ ຢູ່ຍ້ອນບັນຫາທາງດ້ານສຸກຂະພາບ ຫລື ຍ້ອນສະພາບແວດລ້ອມ ອື່ນໆ ແຕ່ 03 ເດືອນຂຶ້ນໄປ ຈະບໍ່ໄດ້ຮັບເງິນອຸດໜູນຕໍາແໜ່ງນັ້ນອີກຕໍ່ໄປ.

7.3 ລັດຖະກອນ ຜູ້ທີ່ພວມດໍາລົງຕໍາແໜ່ງບໍລິຫານໃດໜຶ່ງ ຖືກແຕ່ງຕັ້ງຢ່າງເປັນທາງການໄປປະຈໍາການຊົ່ວຄາວ ຢູ່ລັດວິສາຫະກິດຕ່າງໆ ຫລື ອົງການຈັດຕັ້ງສາກົນ ຫລື ໂຄງການຊ່ວຍເຫລືອຂອງສາກົນ ດັ່ງລະບຸໄວ້ໃນມາດຕາ 46 ຂອງດໍາລັດ ເລກທີ 82/ນຍ, ລົງວັນທີ 19 ພຶດສະພາ 2003 ວ່າດ້ວຍ ລະບຽບລັດຖະກອນແຫ່ງ ສ.ປ.ປ.ລາວ ຈະບໍ່ໄດ້ຮັບເງິນອຸດໜູນຕໍາແໜ່ງບໍລິຫານເບື້ອງລັດອີກຕໍ່ໄປ. ເວລາສິ້ນສຸດການປະຕິບັດໜ້າທີ່ ແລ້ວກັບຄືນມາກົມກອງເກົ່າ ແລະ ໄດ້ຮັບການແຕ່ງຕັ້ງດໍາລົງຕໍາແໜ່ງບໍລິຫານປະເພດໃດໜຶ່ງຄືນໃໝ່ ກໍ່ຈະໄດ້ຮັບເງິນອຸດໜູນຕໍາແໜ່ງນັ້ນຕໍ່ໄປ.

7.4 ລັດຖະກອນ ຜູ້ຖືກແຕ່ງຕັ້ງໃຫ້ຮັກສາການແທນຕໍາແໜ່ງບໍລິຫານປະເພດໃດໜຶ່ງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 07 ຂອງດໍາລັດສະບັບນີ້ ເມື່ອຢຸດເຊົາບໍ່ໄດ້ຮັກສາການແທນອີກແລ້ວ ຈະບໍ່ໄດ້ຮັບເງິນອຸດໜູນຕໍາແໜ່ງນັ້ນອີກ ນັບແຕ່ວັນທີຂໍ້ຕົກລົງຢຸດເຊົາໃຫ້ຮັກສາການແທນ ມີຜົນສັກສິດເປັນຕົ້ນໄປ.

7.5 ລັດຖະກອນ ທີ່ພວມດຳລົງຕຳແໜ່ງບໍລິຫານປະເພດໃດໜຶ່ງຢູ່ ເມື່ອປະລະໜ້າທີ່ເປັນເວລາ 30 ວັນຕິດຕໍ່ກັນຂຶ້ນໄປ ແລະ ຖືກປະຕິບັດວິໄນບໍ່ໃຫ້ດຳລົງຕຳແໜ່ງນັ້ນອີກ ກໍ່ຈະບໍ່ໄດ້ຮັບເງິນອຸດໜູນຕຳແໜ່ງນັ້ນຕໍ່ໄປ.

## ມາດຕາ 8. ວິທີຈັດຕັ້ງປະຕິບັດ

ມອບໃຫ້ ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສຳນັກງານນາຍົກລັດຖະມົນຕີ ກຳນົດ ຫລື ທຽບປະເພດຕຳແໜ່ງບໍລິຫານ ອື່ນໆ ທີ່ບໍ່ໄດ້ກຳນົດໃນດຳລັດສະບັບນີ້ ແລະ ອອກບົດແນະນຳຈັດຕັ້ງປະຕິບັດ ໃຫ້ລະອຽດຕື່ມ; ຊຸກຍູ້, ຕິດຕາມ, ກວດກາ ແລະ ເກັບກຳສະພາບການແຕ່ງຕັ້ງ, ການໂຍກຍ້າຍ, ການໝູນວຽນຕຳແໜ່ງ ແລະ ການປະຕິບັດນະໂຍບາຍເງິນອຸດໜູນຕຳແໜ່ງຕໍ່ລັດຖະກອນ ທີ່ໄດ້ຮັບການແຕ່ງຕັ້ງ ເພື່ອລາຍງານລັດຖະບານ.

ມອບໃຫ້ ກະຊວງການເງິນສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າ ແລະ ນຳສະເໜີລັດຖະບານອະນຸມັດອັດຕາເງິນອຸດໜູນຕຳແໜ່ງ. ພ້ອມກັນນີ້, ກໍ່ໃຫ້ຂຶ້ນແຜນງົບປະມານ ເພື່ອປະຕິບັດນະໂຍບາຍຕໍ່ຜູ້ທີ່ດຳລົງຕຳແໜ່ງບໍລິຫານຕ່າງໆ ຢ່າງເໝາະສົມ.

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການອື່ນໆຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ມີໜ້າທີ່ຮັບຜິດຊອບ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

## ມາດຕາ 9. ຜົນສັກສິດ

ດຳລັດສະບັບນີ້ ປ່ຽນແທນ ດຳລັດ ສະບັບເລກທີ173/ນຍ, ລົງວັນທີ 11 ພະຈິກ 1993 ວ່າດ້ວຍການກຳນົດຕຳແໜ່ງບໍລິຫານ ຂອງຝ່າຍພົນລະເຮືອນ.

ດຳລັດສະບັບນີ້ ມີຜົນໃຊ້ບັງຄັບນັບແຕ່ ງວດ I ສົກງົບປະມານ 2008-2009 ເປັນຕົ້ນໄປ.

ນາຍົກລັດຖະມົນຕີແຫ່ງ ສ ປ ປ ລາວ

ບົວສອນ ບຸບຜາວັນ